ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ພາກວິຊາຄູ ພາສາອັງກິດ-ໄອຊີທີ ເລກທີ 013/ອກ.ອທ
ນະຄອນຫຼວງວຽງຈັນ, ວັນທີ 22 ກຸມພາ 2024

# ບົດສະຫຼຸບປະຈຳເດືອນ 2/2024
# ແລະ ແຜນວຽກຈຸດສຸມເດືອນ 3/2024

**ຮຽນ:** ທ່ານ ຜູ້ອຳນວຍການວິທະຍາໄລຄູ ດົງຄຳຊ້າງ

**ເລື່ອງ:** ບົດສະຫຼຸບປະຈຳເດືອນ 2/2024 ແລະ ແຜນວຽກຈຸດສຸມປະຈຳເດືອນ 3/2024 ຂອງພາກວິຊາຄູ ພາສາອັງກິດ-ໄອຊີທີ

ພາກວິຊາຄູ ພາສາອັງກິດ-ໄອຊີທີ ໄດ້ສັງລວມແຜນການເຄື່ອນໄຫວປະຈຳເດືອນ 2/2024 ແລະ ແຜນຈຸດສຸມປະຈຳເດືອນ 3/2024 ດັ່ງນີ້:

## I. ການເຄື່ອນໄຫວວຽກງານທີ່ພົ້ນເດັ່ນປະຈຳເດືອນ 2/2024

### ກ. ວຽກງານແນວຄິດການເມືອງ, ການຈັດຕັ້ງ ແລະ ນະໂຍບາຍ

1. ພະນັກງານສ່ວນຫຼາຍມີແນວຄິດຫຼັກໝັ້ນດີ ແລະ ມີຄວາມອຸ່ນອ່ຽງທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ.
2. ມີຄວາມຮັບຜິດຊອບຕໍ່ໜ້າທີ່ມອບໝາຍໃຫ້ເປັນຢ່າງດີ.
3. ປະຕິບັດ ແລະ ນັບຖືລະບຽບຂອງພັກ-ລັດໄດ້ເປັນຢ່າງດີເຊິ່ງມັນໄດ້ສະແດງອອກໃນການປະຕິບັດໂມງເວລາ ແຕ່ງກາຍ, ການໄປ-ການມາ ແລະ ການປະຕິບັດວຽກງານແຕ່ລະໜ້າວຽກ.

### ຂ. ວຽກງານວິຊາສະເພາະ

1. ຄູທຸກຄົນໄດ້ເອົາໃຈໃສ່ຂຶ້ນຫ້ອງສອນເປັນປົກກະຕິ.
2. ນຳພານັກສຶກສາຄູອອກແຮງງານໃນຕອນແລງວັນພຸດ
3. ນຳພານັກສຶກສາຄູພາຍໃນສາຍອອກແຮງງານໃນເຂດຮັບຜິດຊອບ
4. ສັງລວມຄະແນນ ແລະ ປ້ອນຄະແນນນັກສຶກສາເຂົ້າຖານຂໍ້ມູນ
5. ຮຽບຮຽງເອກະສານປະກອບການສອນ
6. ລົງປະເມີນນັກສຶກສາປີສຸດທ້າຍຢູ່ເມືອງແກ່ນທ້າວ ແຂວງ ໄຊຍະບູລີ.
7. ຝຶກອົບຮົມຄູສອນໃນການນຳໃຊ້ຫຼັກສູດສ້າງຄູມັດທະຍົມລະດັບປະລິນຍາຕີໃນ 6 ສາຂາວິຊາ (ພາສາລາວ ຄະນິດສາດ, ຟີຊິກ, ພາສາອັງກິດ, ຊີວະ ແລະ ເຄມີ) ທີ່ຫ້ອງປະຊຸມວິທະຍາໄລຄູບ້ານເກີນ ວັນ 5-10 ກຸມພາ 2024.
8. ຝຶກອົບຮົມສ້າງຂີດຄວາມສາມາດ ໃນການຫັນປ່ຽນຫຼັກສູດ ແລະ ການສອນໃຫ້ແກ່ບຸກຄະລາກອນສ້າງຄູໃນ ສປປ ລາວ ຄັ້ງທີ 2 ທີ່ເມືອງວັງວຽງ ແຂວງວຽງຈັນ ວັນທີ 19-23 ກຸມພາ 2024.

❖ **ຂໍ້ຄົງຄ້າງ:** ຍັງມີບາງວຽກທີ່ຕ້ອງໄດ້ສືບຕໍ່ປະຕິບັດ ແລະ ປະຕິບັດແບບຕໍ່ເນື່ອງ

## II. ແຜນວຽກຈຸດສຸມປະຈຳເດືອນ 3/2024

**ກ. ວຽກງານແນວຄິດການເມືອງ, ການຈັດຕັ້ງ ແລະ ນະໂຍບາຍ**

1. ສືບຕໍ່ແນວຄິດຫຼັກໝັ້ນ, ເຊື່ອໝັ້ນຕໍ່ການນໍາພາຂອງຂອງພັກ
2. ມີຄວາມຮັບຜິດຊອບຕໍ່ໜ້າທີ່ມອບໝາຍໃຫ້ເປັນຢ່າງດີ.
3. ຫ້າວຫັນປະຕິບັດ ແລະ ນັບຖືລະບຽບຂອງພັກ-ລັດ

**ຂ. ວຽກງານວິຊາສະເພາະ**

1. ສືບຕໍ່ຂຶ້ນຫ້ອງສອນປົກກະຕິ.
2. ສືບຕໍ່ນໍາພານັກສຶກສາອອກແຮງງານໃນເຂດຮອບຜິດຊອບ
3. ຝຶກອົບຮົມການນໍາໃຊ້ ICT ແລະ ການສອນພາສາອັງກິດແບບໂມໂມຊາຍ (Momosign) ໃຫ້ແກ່ຄູ-ອາຈານ ສອນໂຮງຮຽນປະຖົມ ແລະ ມັດທະຍົມສາທິດ ດົງຄໍາຊ້າງ.
4. ຂຶ້ນແຜນສອນບໍາລຸງພາສາອັງກິດໃຫ້ແກ່ຄູສອນໃນວິທະຍາໄລຄູ ດົງຄໍາຊ້າງ

**III. ຂໍ້ສະເໜີ**

ດັ່ງນັ້ນ, ພາກວິຊາຄູ ພາສາອັງກິດ-ໄອຊີທີ ຈິ່ງລາຍງານມາຍັງທ່ານເພື່ອຮັບຊາບຕາມທາງຄວນດ້ວຍ.

**ຫົວໜ້າພາກວິຊາຄູ ພາສາອັງກິດ-ໄອຊີທີ** **ຜູ້ສັງລວມ**